ເລື່ອງ: ຍົກເລີກເຂື່ອນດອນສະໂຮງ: ປົກປ້ອງອະນາຄົດຂອງແມ່ນ້ຳຂອງ ແລະ ຄົນທີ່ອາໃສແມ່ນ້ຳຂອງ

ຮຽນ:    ພະນະທ່ານທັງຫຼາຍ,

ພວກຂ້າພະເຈົ້າ ຜູ້ທີ່ໄດ້ລົງຊື່ຢູ່ຂ້າງລຸ່ມກຳລັງຂຽນຈົດໝາຍເພື່ອສະແດງຄວາມເປັນຫ່ວງເປັນໃຍອັນຈິງຈັງກ່ຽວກັບເຂື່ອນດອນ ສະໂຮງ ຢູ່ພາກໃຕ້ຂອງລາວ ແລະ ອະນາຄົດດ້ານຊີວິດການເປັນຢູ່ ແລະ ການຄ້ຳປະກັນດ້ານສະບຽງອາຫານທົ່ວພາກພື້ນ ແມ່ນ້ຳຂອງ.

ແມ່ນ້ຳຂອງມີຄວາມສຳຄັນລະດັບໂລກເຊິ່ງສະໜັບສະໜູນຄວາມຫຼາກຫຼາຍດ້ານຊີວະນາໆພັນທີ່ເປັນເອກະລັກເຊິ່ງມີພຽງ ແມ່ນ້ຳອາເຊອນທີ່ເປັນຄູ່ແຂ່ງ. ແມ່ນ້ຳຂອງເປັນແຫຼ່ງການປະມົງນ້ຳຈືດທີ່ອຸດົມສົມບູນ ແລະ ໃຫ່ຍທີ່ສຸດຂອງໂລກ ທັງເປັນ ຊັບພະຍາ ກອນທີ່ສຳຄັນສຳລັບພາກພື້ນແມ່ນ້ຳຂອງທັງໝົດ ແລະ ເປັນເສັ້ນຊີວິດສຳລັບໂລກພວກເຮົາ. ເຂື່ອນດອນສະໂຮງທີ່ ໄດ້ສະເໜີ ສ້າງ ຈະປິດກັ້ນຊ່ອງທາງຫຼັກຢູ່ແມ່ນ້ຳຂອງ ເຊັ່ນ: ຊ່ອງທາງຮູດອນສະໂຮງທີ່ປານຳໃຊ້ສຳລັບເຄື່ອນຍ້າຍໄປມາ ຕະຫຼອດປີທົ່ວພາກພື້ນດັ່ງກ່າວ. ຜົນກະທົບຕ່າງໆຂອງໂຄງການນີ້ຈະເປັນໄພພິບັດຕໍ່ການປະມົງນ້ຳຈືດ ແລະ ຕໍ່ມາແມ່ນ ການຄ້ຳປະກັນດ້ານສະບຽງອາຫານ ແລະ ຊີວິດການເປັນຢູ່ຂອງຄົນເປັນລ້ານໆ.

ມາດຕະການຕ່າງໆສຳລັບການບັນເທົາທີ່ໄດ້ສະເໜີແມ່ນຂຶ້ນກັບຜົນສຳເລັດຂອງໂຄງການເຊິ່ງບໍ່ເຄີຍໄດ້ຮັບການທົດສອບຢູ່ໃນ ພາກພື້ນແມ່ນ້ຳຂອງ ແລະ ບັນຜູ້ຊ່ຽວຊານລະດັບສາກົນຕ່າງໆກໍ່ສະແດງຄວາມຢ້ານກົວວ່າ: ມາດຕະການດັ່ງກ່າວອາດຈະບໍ່ ປະສົບຜົນສຳເລັດ, ຈະບໍ່ພຽງພໍທີ່ຈະບັນເທົາຄວາມເສຍຫາຍຂອງຊ່ອງທາງຮູດອນສະໂຮງສຳລັບການຍົກຍ້າຍໄປມາຂອງປາ. ແມ່ນ້ຳຂອງຈະເປັນອັນຕະລາຍຢ່າງໜັກຕໍ່ປາຂ່າ ແລະ ເຂດແຮມຊາ ຂອງກຳປູເຈຍກໍ່ຈະໄດ້ຮັບຜົນກະທົບເຊັ່ນດຽວກັນ. ມີ ການເດີມພັນຫຼາຍເກີນໄປທີ່ຈະເອົາແມ່ນ້ຳຂອງເຂົ້າໃນການພະນັນໃດໜຶ່ງ; ເປັນການສ້າງຄວາມສ່ຽງແກ່ຊີວິດຂອງຄົນນັບລ້ານ ທຽບໃສ່ຜົນຕອບແທນທີ່ຈຳກັດຫຼາຍ.

ພວກຂ້າພະເຈົ້າເຂົ້າໃຈວ່າ ການສົນທະນາຜ່ານຂະບວນການປຶກສາຫາລືລະດັບພາກພື້ນກ່ອນການສ້າງເຂື່ອນດອນສະໂຮງກຳລັງ ຈະສິ້ນສຸດລົງແລ້ວ ແລະ ພວກຂ້າພະເຈົ້າຢາກຊຸກຍູ້ໃຫ້ບັນດາທ່ານຜູ້ນຳຂອງປະເທດລຸ່ມນ້ຳຂອງດຳເນີນມາດຕະການອັນຮີບ ດ່ວນໃນການຈັດລຽງບູລິມະສິດກ່ຽວກັບອະນາຄົດທີ່ຍືນຍົງຂອງຊັບພະຍາກອນຕ່າງໆທີ່ສຳຄັນຂອງແມ່ນ້ຳຂອງ.
ພວກຂ້າພະເຈົ້າຮ້ອງຂໍມາຍັງບັນດາຜູ້ນຳປະເທດລຸ່ມນ້ຳຂອງເພື່ອດຳເນີນມາດຕະການອັນຮີບດ່ວນເພື່ອປົກປັກຮັກສາແມ່ນ້ຳ ຂອງໂດຍບໍ່ອະນຸຍາດໃຫ້ດຳເນີນການສ້າງເຂື່ອນດອນສະໂຮງ ພ້ອມທັງສິ່ງເສີມທາງເລືອກຕ່າງໆດ້ານພະລັງງານແບບຍືນຍົງ.

ດ້ວຍຄວາມຈິງໃຈ,